**ໂຮງຮຽນ LOWELL PUBLIC SCHOOLS**
ສຳນັກງານບໍລິຫານສ່ວນກາງ Henry J. Mroz
155 Merrimack Street
Lowell, MA 01852

ວັນທີ 1 ເມສາ 2021

ເຖິງບັນດານັກຮຽນ, ຄອບຄົວຂອງພວກເຂົາ ແລະ ເຈົ້າໜ້າທີ່ປະຈຳໂຮງຮຽນ Lowell Public Schools,

ພວກເຮົາກຳລັງລໍຖ້າວັນຈັນທີ່ຈະມາຮອດນີ້, ເຊິ່ງຈະມີນັກຮຽນໃນຊັ້ນຮຽນ K ຫາ ເກຣດ 5 ຈຳນວນທີ່ເພີ່ມຂຶ້ນກັບຄືນມາສຶກສາຮ່ຳຮຽນຢູ່ໃນໂຮງຮຽນແບບເຕັມເວລາ. ຂໍຂອບໃຈສຳລັບການໃຫ້ຄວາມຮ່ວມມື, ການສະໜັບສະໜູນ ແລະ ຄຳເຫັນທັງໝົດຂອງທ່ານ ໃນຂະນະທີ່ພວກເຮົາໄດ້ກຽມຄວາມພ້ອມຂອງໂຮງຮຽນ ເຊິ່ງຈະເປັນມື້ທຳອິດຢູ່ທີ່ໂຮງຮຽນຂອງນັກຮຽນບາງຄົນໃນໄລຍະປີກວ່າທີ່ຜ່ານມາ.

ວັນຈັນຈະເປັນມື້ທີ່ໜ້າຕື່ນເຕັ້ນຢ່າງແນ່ນອນ. ໃນການຊ່ວຍແນະນຳໃຫ້ຄອບຄົວຂອງນັກຮຽນກ້າວຂ້າມຜ່ານການປ່ຽນແປງ ເພື່ອກັບໄປສູ່ການສຶກສາຮ່ຳຮຽນພາຍໃນຫ້ອງຮຽນ, ພວກເຮົາໄດ້ຮວບຮວມລາຍການຂໍ້ມູນອັບເດດ ແລະ ແຈ້ງເຕືອນຕ່າງໆ, ລວມໄປເຖິງຂໍ້ມູນກ່ຽວກັບລະບົບຂົນສົ່ງ, ບໍລິການອາຫານ, ໂປຣແກຣມການກວດຫາເຊື້ອພະຍາດອັກເສບປອດ ໂຄວິດ-19 (COVID-19) ແບບ pooled testing (ລວມເປັນກຸ່ມ) ແລະ ມາດຕະການດ້ານຄວາມປອດໄພອື່ນໆທີ່ພວກເຮົາກຳລັງດຳເນີນການ. ກະລຸນາເຂົ້າເບິ່ງແຫຼ່ງຂໍ້ມູນເຫຼົ່ານີ້ທີ່ໂພສລົງໃນເວັບໄຊຂອງເຂດການສຶກສາ: https://www.lowell.k12.ma.us/inpersonlearning

ໃນຂະນະທີ່ຄວາມຕື່ນເຕັ້ນກ່ຽວກັບການຂະຫຍາຍການຮຽນການສອນໃນຫ້ອງຮຽນອອກໄປມີການເພີ່ມທະວີຂຶ້ນ, ຖ້າທ່ານເປັນຄອບຄົວທີ່ເລືອກວ່າຈະໃຫ້ລູກຂອງທ່ານຮຽນຜ່ານຮູບແບບທາງໄກຕໍ່ໄປຈົນຈົບສົກຮຽນນີ້, ກະລຸນາຮັບຮູ້ໄວ້ວ່າ: ພວກເຮົາມຸ່ງໝັ້ນທີ່ຈະຮັກສາຄຸນນະພາບຂອງສະພາບແວດລ້ອມການຮຽນຜ່ານຮູບແບບທາງໄກ. ເຊິ່ງຄູອາຈານ ແລະ ເຈົ້າໜ້າທີ່ໃຫ້ການສະໜັບສະໜູນຂອງພວກເຮົາ ໄດ້ເຂົ້າຮ່ວມການຝຶກອົບຮົມເພີ່ມເຕີມ ໃນຂະນະທີ່ພວກເຂົາທຳການກະກຽມທີ່ຈະສ້າງການມີສ່ວນຮ່ວມໃຫ້ແກ່ທັງນັກຮຽນທີ່ຮຽນໃນຫ້ອງຮຽນ ແລະ ນັກຮຽນທີ່ຮຽນຜ່ານຮູບແບບທາງໄກໄປພ້ອມກັນໃນວັນຈັນ ພ້ອມດຽວກັນນັ້ນພວກເຮົາກໍໄດ້ຖືເອົາຄວາມຄົງທີ່ ແລະ ຄວາມຕໍ່ເນື່ອງໃນການຈັດຕາຕະລາງຊັ້ນຮຽນເປັນບຸລິມະສິດຫຼັກ ເພື່ອຮັກສາສາຍສຳພັນທີ່ຄູອາຈານ ແລະ ນັກຮຽນໄດ້ຫຼໍ່ຫຼອມຂຶ້ນຕັ້ງແຕ່ໃນໄລຍະເລີ່ມຕົ້ນສົກຮຽນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້.

ຂ້າພະເຈົ້າຢາກຢ້ຳກ່າວຄຳຂອບໃຈອີກຄັ້ງສຳລັບການໃຫ້ຄວາມຮ່ວມມື, ຄວາມອົດທົນ, ການປັບຕົວ ແລະ ຄວາມເຂົ້າໃຈຂອງທ່ານທີ່ຕໍ່ເນື່ອງຕະຫຼອດຂະບວນການນີ້ ໃນຂະນະທີ່ພວກເຮົາສືບຕໍ່ດຳເນີນງານເພື່ອມອບການສຶກສາທີ່ມີຄຸນນະພາບສູງສຸດໃຫ້ແກ່ນັກຮຽນຂອງພວກເຮົາ, ບໍ່ວ່າຈະຢູ່ໃນສະຖານທີ່ໃດກໍຕາມ. ວັນຈັນຈະເປັນມື້ທຳອິດຂອງການສຶກສາຮູບແບບໃໝ່ ບໍ່ພຽງແຕ່ສຳລັບນັກຮຽນຫຼາຍຄົນເທົ່ານັ້ນ, ແຕ່ສຳລັບເຈົ້າໜ້າທີ່ຂອງພວກເຮົາອີກດ້ວຍ - ແລະ ໃນຂະນະທີ່ພວກເຮົາທຳການສຳຫຼວດສະພາບແວດລ້ອມໃໝ່ອີກຮູບແບບໜຶ່ງຮ່ວມກັນ, ພວກເຮົາກໍມີຄວາມມຸ່ງໝັ້ນທີ່ຈະຮ່ວມມືກັບທ່ານໃນທຸກໆບາດກ້າວ.

ຈົ່ງດຳລົງຊີວິດດ້ວຍຄວາມປອດໄພ ແລະ ຈົ່ງມີສຸຂະພາບທີ່ແຂງແຮງ. ພວກເຮົາຕື່ນເຕັ້ນຫຼາຍ ແລະ ລໍຖ້າໃຫ້ຮອດວັນຈັນບໍ່ໄຫວແລ້ວ!

ດ້ວຍຄວາມນັບຖື ແລະ ຮັກແພງ,

Dr. Joel D. Boyd
ຜູ້ບໍລິຫານໂຮງຮຽນ